Medi-Cal &
ຢາຕາມໃບສັ່ງຂອງແພດ

ຂໍ້ມູນກ່ຽວກັບ Medi-Cal

# ການຮັບເອົາຢາຕາມໃບສັ່ງຂອງແພດກັບ **Medi-Cal**

## ຢາໃດແດ່ທີ່ທາງ **Medi-Cal** ຈະຈ່າຍໃຫ້?

Medi-Cal ຄຸ້ມຄອງຈ່າຍໃຫ້ສຳລັບ:

- **ຢາຕ່າງໆ ທີ່ຈຳເປັນຕໍ່ການປິ່ນປົວ.** ອັນນີ້ແມ່ນຢາຕາມໃບສັ່ງ ເຊິ່ງທ່ານໝໍຂອງທ່ານເປັນຜູ້ບອກວ່າ ມັນຈຳເປັນ ເພື່ອໃຫ້ທ່ານມີສຸຂະພາບແຂງແຮງ ຫລື ເພື່ອປິ່ນປົວບັນຫາສຸຂະພາບ. Medi-Cal ມີລາຍການຢາທີ່ອານຸຍາດໃຫ້ທ່ານສາມາດຮັບເອົາໄດ້. ຖ້າວ່າ ທ່ານຕ້ອງການຢາເຊິ່ງບໍ່ຢູ່ໃນລາຍການ, ທ່ານກໍສາມາດເອົາຢານັ້ນໄດ້. ພຽງແຕ່ໃຫ້ທ່ານໝໍຂອງທ່ານອະທິບາຍວ່າ ເປັນຫຍັງຢານັ້ນຈຶ່ງຈຳເປັນ ສຳລັບທ່ານ.
- **ຢາບາງຢ່າງທີ່ຊື້ໄດ້ນຳຮ້ານຂາຍຢາ,** ເຊັ່ນວ່າ ຢາວິຕາມິນພິເສດສຳລັບຜູ້ຍິງຖືພາ.

## ຂ້າພະເຈົ້າຈະເອົາຢາຕາມໃບສັ່ງຜ່ານ **Medi-Cal** ໄດ້ຈັ່ງໃດ?

ທ່ານຕ້ອງເອົາໃບສັ່ງຢາໄປທີ່ຮ້ານຂາຍຢາທີ່ຍອມຮັບ Medi-Cal. ຖ້າວ່າ ທ່ານຢູ່ໃນໂຄງການສຸຂະພາບ, ທ່ານໝໍຂອງທ່ານ ແລະຮ້ານຂາຍຢາກໍຕ້ອງຢູ່ໃນໂຄງການສຸຂະພາບຂອງທ່ານດ້ວຍ.

## ແພດການຢາຂອງຂ້າພະເຈົ້າ ບອກຂ້າພະເຈົ້າວ່າ ຂ້າພະເຈົ້າຕ້ອງໄດ້ການອານຸມັດຈາກ **Medi-Cal** ກ່ອນທີ່ຂ້າພະເຈົ້າຈະຮັບເອົາຢາໄດ້. ນັ້ນແມ່ນໝາຍຄວາມວ່າຈັ່ງໃດ?

ທ່ານຕ້ອງໄດ້ຮັບການອານຸມັດຈາກ Medi-Cal ເພື່ອເອົາຢາ ຖ້າວ່າ:

- ທ່ານຕ້ອງການໃບສັ່ງຢາ ຫລາຍກວ່າ 6 ຄັ້ງໃນໜຶ່ງເດືອນ, ຫລື
- ຢາທີ່ທ່ານຕ້ອງການນັ້ນ ບໍ່ໄດ້ຢູ່ໃນລາຍການຢາທີ່ອານຸຍາດໃຫ້ຂອງ Medi-Cal , ຫລື
- ຢາທີ່ທ່ານຕ້ອງການນັ້ນ ແຕກຕ່າງຈາກຢາທີ່ຢູ່ໃນລາຍການທີ່ອານຸຍາດໃຫ້ຂອງ Medi-Cal. ຍົກຕົວຢ່າງ, ທ່ານໝໍຂອງທ່ານອາດສັ່ງຢາບາງຊະນິດເປັນເມັດໃຫ້ ໃນຂະນະທີ່ຢາທີ່ຢູ່ໃນລາຍການມີແຕ່ແບບເປັນຫລອດ (ແຄັບຊູນ).

## ຂ້າພະເຈົ້າຈະຂໍເອົາການອານຸມັດຈາກ **Medi-Cal** ສຳລັບໃບສັ່ງຢາຂອງຂ້າພະເຈົ້າໄດ້ແນວໃດ?

ຈົ່ງຂໍໃຫ້ແພດການຢາ ຫລືທ່ານໝໍສົ່ງຟອມຄຳຮ້ອງຂໍເອົາ ການອານຸມັດສຳລັບການປິ່ນປົວ (Treatment Authorization Request: TAR) ໃຫ້ແກ່ Medi-Cal. ຟອມ TAR ນັ້ນຈະຂໍໃຫ້ທາງ Medi-Cal ອານຸມັດໃບສັ່ງຢາຂອງທ່ານ.

ເມື່ອທາງ Medi-Cal ໄດ້ຮັບຟອມ TAR ຂອງທ່ານ, ທຳມະດາມັນຈະໃຊ້ເວລາ 24 ຊົ່ວໂມງ ໃນການໄດ້ຮັບອານຸມັດ. ບາງເທື່ອ Medi-Cal ຈະຂໍເອົາຂໍ້ມູນເພີ້ມເຕີມຈາກທ່ານໝໍຂອງທ່ານ ຫລືແພດການຢາ. ຖ້າເປັນແນວນີ້, ມັນກໍອາດ ໃຊ້ເວລາດົນກວ່າເກົ່າໃນການໄດ້ຮັບອານຸມັດ. ຖ້າວ່າ ທ່ານບໍ່ໄດ້ຍິນຂ່າວຈາກທາງ Medi-Cal ພາຍໃນ 30 ວັນ, ກໍຄືໝາຍບອກວ່າ ໃບສັ່ງຢາຂອງທ່ານແມ່ນໄດ້ຮັບອານຸມັດ.

ເອກະສານຕ່າງໆໄດ້ຮັບການພັດທະນາໂດຍ:
The Health Consumer ALLIANCE

## ຂ້າພະເຈົ້າຈຳເປັນຕ້ອງໃຊ້ຢາທັນທີ. ສະນັ້ນ ຂ້າພະເຈົ້າຕ້ອງລໍຖ້າການອານຸມັດຈາກ Medi-Cal ບໍ່?

ຈົ່ງຂໍໃຫ້ແຜນການຢາ ເອົາຢາໃຫ້ທ່ານໃຫ້ພຽງພໍສຳລັບ 72 ຊົ່ວໂມງ. ຢາປະລິມານນີ້ຄວນຊ່ວຍທ່ານໄດ້ໃນຂະນະທີ່ທ່ານລໍຖ້າ ການຕັດສິນໃຈຂອງ Medi-Cal. ຖ້າວ່າ ແຜນການຢາຈະບໍ່ໃຫ້ຢານັ້ນແກ່ທ່ານຟຣີ, ທາງຮ້ານຂາຍຢາກໍຕ້ອງຈ່າຍຄ່າຢາ ຄືນໃຫ້ທ່ານ ເມື່ອທາງ Medi-Cal ອານຸມັດໃບ TAR ຂອງທ່ານ.

## ແຜນການຢາຂອງຂ້າພະເຈົ້າບອກວ່າ **Medi-Cal** ຈະບໍ່ຈ່າຍຄ່າຢາໃຫ້ຂ້າພະເຈົ້າ ແລະຂ້າພະເຈົ້າຕ້ອງຈ່າຍເອງ. ຂ້າພະເຈົ້າຈະເຮັດຈັ່ງໃດ?

1. ຢ່າຈ່າຍ.
2. ຈົ່ງຂໍໃຫ້ແຜນການຢາສົ່ງໃບ TAR ເຖິງ Medi-Cal. (ຖ້າວ່າທ່ານໄດ້ຈ່າຍຄ່າຢາແລ້ວ, ທາງແຜນການຢາກໍຍັງຕ້ອງສົ່ງໃບ TAR ໃຫ້ແທນທ່ານ. ຖ້າວ່າ Medi-Cal ອານຸມັດຢາຂອງທ່ານ, ຮ້ານຂາຍຢາກໍຕ້ອງຈ່າຍເງິນຄືນໃຫ້ທ່ານ.)

## ຈະເຮັດແນວໃດ ຖ້າວ່າ ແຜນການຢາຂອງຂ້າພະເຈົ້າບໍ່ຕ້ອງການສົ່ງໃບ **TAR** ໃຫ້ຂ້າພະເຈົ້າ?

ຖ້າວ່າ ທ່ານຢູ່ໃນໂຄງການສຸຂະພາບ ແລະຮ້ານຂາຍຢາຂອງທ່ານກໍເປັນສ່ວນໜຶ່ງຢູ່ໃນໂຄງການນັ້ນດ້ວຍ:

- ຈົ່ງຂໍເອົາການຊ່ວຍເຫລືອ ຈາກໂຄງການສຸຂະພາບຂອງທ່ານ. ໂຄງການສຸຂະພາບຂອງທ່ານສາມາດຂໍຮ້ອງໃຫ້ຮ້ານຂາຍຢາສົ່ງໃບ TAR ໃຫ້ແທນທ່ານ. ໂຄງການສຸຂະພາບຂອງທ່ານຍັງສາມາດແນະນຳ ໃຫ້ທ່ານໄປຮ້ານຂາຍຢາບ່ອນອື່ນໆ ໄດ້ດ້ວຍ.
- ທ່ານສາມາດຍື່ນໜັງສືຮ້ອງທຸກຕ້ານກັບຮ້ານຂາຍຢາໄດ້. ໜັງສືຮ້ອງທຸກກໍຄືກັບການຟ້ອງ. ເພື່ອເລີ້ມຂັ້ນຕອນ ການຮ້ອງທຸກ, ຈົ່ງໂທຣຫາ ພະແນກການບໍລິການສະມາຊິກຂອງໂຄງການສຸຂະພາບຂອງທ່ານ. ເລກໂທຣຂອງ ພະແນກບໍລິການສະມາຊິກ ມີຢູ່ເທິງບັດປະກັນພັຍສຸຂະພາບຂອງທ່ານ.

ຖ້າວ່າ ທ່ານບໍ່ຢູ່ໃນໂຄງການສຸຂະພາບ, ຈົ່ງຖາມທ່ານໝໍຂອງທ່ານເພື່ອຂໍການຊ່ວຍເຫລືອ. ທ່ານໝໍຂອງທ່ານສາມາດ ຊ່ວຍເຫລືອທ່ານໄດ້ໂດຍການ:

- ເວົ້າກັບຮ້ານຂາຍຢາໃຫ້ແທນທ່ານ.
- ແນະນຳໃຫ້ໄປຮ້ານຂາຍຢາບ່ອນອື່ນ.
- ສົ່ງໃບ TAR ໃຫ້ແທນທ່ານ.

## ຈະເກີດຫຍັງຂຶ້ນ ຖ້າວ່າ **Medi-Cal** ບໍ່ອານຸມັດຢາຂອງຂ້າພະເຈົ້າ?

1. ຈົ່ງຊອກເບິ່ງວ່າເປັນຫຍັງ. ທາງ Medi-Cal ຄວນສົ່ງຈົດໝາຍເຖິງທ່ານເຊິ່ງອະທິບາຍວ່າເປັນຫຍັງເພິ່ນຈຶ່ງບໍ່ອານຸມັດຢາໃຫ້ທ່ານ. ທ່ານສາມາດຂໍເອົາສຳເນົາຂອງຈົດໝາຍຈາກແຜນການຢາຂອງທ່ານໄດ້.
2. ຈົ່ງຖາມທ່ານໝໍຂອງທ່ານ ຖ້າວ່າມີຢາອື່ນເຊິ່ງທ່ານສາມາດໃຊ້ໄດ້ ເຊິ່ງທາງ Medi-Cal ຈະອານຸມັດໃຫ້.

3. ຈົ່ງອ່ານເອກະສານຂໍ້ມູນຂອງເຮົາທີ່ຊື່ວ່າ "ຈະເປັນແນວໃດ ຖ້າຫາກ Medi-Cal ບອກວ່າ 'ບໍ່'?" ("What if Medi-Cal Says 'No'?") ສໍາລັບຂໍ້ມູນກ່ຽວກັບສິດທິຂອງທ່ານໃນການຂໍເອົາການພິຈາລະນາຄະດີ. ການພິຈາລະນາຄະດີແມ່ນການໃຫ້ ໂອກາດທ່ານອະທິບາຍວ່າເປັນຫຍັງຢາຂອງທ່ານຈຶ່ງຄວນຖືກອານຸມັດ. ຈົ່ງໂທຣຫາພວກເຮົາທີ່ **1-877-734-3258 or 619-744-0935** ສໍາລັບສໍາເນົາຂອງເອກະສານຂໍ້ມູນນີ້.

## ຂ້າພະເຈົ້າຍັງມີຂໍ້ສົງໃສ. ຂ້າພະເຈົ້າສາມາດໂທຣຫາໃຜໄດ້ແດ່?

ຈົ່ງໂທຣຫາພວກເຮົາທີ່ Consumer Center for Health Education & Advocacy. ເລກໂທຣຂອງພວກເຮົາຄື **1-877-734-3258 or 619-744-0935**. ພວກເຮົາຢູ່ທີ່ນີ້ເພື່ອຊ່ວຍເຫລືອທ່ານ!


**Consumer Center for Health Education and Advocacy**
**1475 Sixth Ave., 4th Floor, San Diego, CA 92101**
**1-877-734-3258 (free call)**
**www.healthconsumer.org**



ການຜະລິດຂໍ້ມູນນີ້ ໄດ້ຮັບທຶນຊ່ວຍເຫລືອພາຍໃຕ້ກອງທຶນຊັບສິນຂອງອົງການ The MEGA Life and Health Insurance Company ແລະໂດຍ The California Endowment.